ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce-Lao PDR
Trade for Development
www.laosaft.org
TDF Trade Development Facility
TDF - Co-financed by:
Australia, European Union, Germany, Ireland, World Bank
ສະຖາບັນຄົ້ນຄວ້າເສດຖະກິດ ອຸດສາຫະກຳ ແລະ ການຄ້າ
Economic Research Institute for Industry and Trade
ກະຊວງ ອຸດສາຫະກຳ ແລະ ການຄ້າ
ສະຖາບັນຄົ້ນຄວ້າເສດຖະກິດ ອຸດສາຫະກຳ ແລະ ການຄ້າ
Economic Research Institute for Industry and Trade

**Policy Brief**

## ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

# ບັນຫາ ແລະ ອຸປະສັກ ຂອງການສົ່ງອອກເຂົ້າ ໄປສປຈີນ

ສິງຫາ, 2018


### ສະຫຼຸບຫຍໍ້

ສປປລາວ ມີຄວາມຕ້ອງການຢາກສົ່ງອອກຜະລິດຕະພັນເຂົ້າສານ ໄປຂາຍຢູ່ ສປ ຈີນ, ການສົ່ງຜະລິດຕະພັນເຂົ້າໄປ ສປ ຈີນ ຍັງມີ ອຸປະສັກ ຫຼາຍຢ່າງທີ່ທ້າທາຍ. ດັ່ງນັ້ນ, ລັດຖະບານ ສປປ ລາວ ໄດ້ເຊັນສັນຍາກັບ ລັດຖະບານ ສປ ຈີນ ໂດຍມີການກຳນົດໂກ້ຕ້າ ໃຫ້ເຂົ້າລາວ ສົ່ງໄປ ສປ ຈີນ 20,000ໂຕນ ໃນປີ 2016-2017 , ແຕ່ ສປປ ລາວ ສາມາດສົ່ງອອກໄດ້ພຽງແຕ່ 1 0,875ໂຕນ ແລະ ໄດ້ແກ່ຍາວມາຮອດ ປີ 2018. ສາເຫດທີ່ລາວບໍ່ສາມາດສົ່ງເຂົ້າໄປ ຈີນ ໄດ້ຄົບຕາມສັນຍາ ແມ່ນຍ້ອນເຂົ້າສານລາວ ບໍ່ຜ່ານ ມາດຕະຖານຄຸນນະພາບ ຕາມການກຳນົດຂອງສປ ຈີນ , ເຊິ່ງມີ ສາເຫດມາຈາກ ຄວາມຂາດຕົກບົກຜ່ອງໃນຕ່ອງໂສ້ການຜະລິດ (ການສະໜອງບໍ່ພໍ, ຄຸນນະພາບຫຼຸດມາດຕະຖານ, ປະສິດທິຜົນຕ່ຳ ເຮັດໃຫ້ຕົ້ນທຶນສູງ) ຫາການບໍລິຫານການສົ່ງອອກ ຢູ່ຝັ່ງລາວ. ນະໂຍບາຍ ແລະ ກິດຈະກຳສົ່ງເສີມ ຈຶ່ງຕ້ອງເລັງໃສ່ຈຸດດັ່ງກ່າວ , ນອກເໜືອຈາກການຊຸກຍູ້ ໃຫ້ມີຫຼາຍກວ່າ ບໍລິສັດດຽວ ທີ່ມີສິດ ສົ່ງຜະລິດຕະພັນເຂົ້າສານ ຂອງ ລາວ ໄປ ສປ ຈີນ.

# ບັນຫາ ແລະ ອຸປະສັກຂອງການສົ່ງອອກເຂົ້າໄປສປຈີນ

## ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

ໂດຍ ຈັນທະພອນ ສີລິປັນໂຍ

ສະຖາບັນຄົ້ນຄວ້າເສດຖະກິດອຸດສາຫະກຳ ແລະ ການຄ້າ

silipanyoc@yahoo.com

ສິງຫາ,2018

### 1. ພາກສະເໜີ

ສປປລາວຕ້ອງການສົ່ງຜະລິດຕະພັນເຂົ້າສານ ໄປສປ ຈີນ, ແຕ່ຍັງມີບັນຫາ ແລະ ອຸປະສັກ ຫຼາຍຢ່າງທີ່ທ້າທາຍ ທີ່ເຮັດໃຫ້ ການສົ່ງເຂົ້າສານຂອງ ລາວ ໄປ ຈີນຍັງບໍ່ໄດ້ ເຕັມສັກກາຍະພາບທີ່ມີ. ລັດຖະບານ ລາວ ໄດ້ເຊັນ ສັນຍາກັບ ລັດຖະບານ ຈີນ ໂດຍມີການກຳນົດໂກ້ຕ້າ ໃຫ້ເຂົ້າລາວ ສົ່ງໄປ ສປ ຈີນ 20,000ໂຕນ ໃນປີ 2016-2017ແຕ່ ສປປ ລາວ ສາມາດສົ່ງອອກໄດ້ພຽງ ແຕ່ 10,875ໂຕນ ແລະ ແກ່ຍາວມາຮອດ ປີ 2018.

ສາເຫດທີ່ລາວບໍ່ສາມາດສົ່ງເຂົ້າໄປຈີນໄດ້ຄົບຕາມ ສັນຍາ ຍ້ອນຫຍັງ?ແມ່ນຫຍັງເປັນບັນຫາ ແລະ ອຸປະສັກ ຕໍ່ການສົ່ງອອກເຂົ້າລາວໄປສປຈີນ? ນີ້ແມ່ນຄຳຖາມ ທີ່ຜູ້ ຮັບຜິດຊອບນະໂຍບາຍຕ້ອງການຄວາມກະຈ່າງແຈ້ງເພື່ອ ຈະໄດ້ວາງແນວທາງໃນການແກ້ໄຂບັນຫາທີ່ຖືກຕ້ອງ.

### 2. ການຄົ້ນຄວ້າ ແລະ ຜົນໄດ້ຮັບ

ໃນການຄົ້ນຄວ້າ ນີ້ ໄດ້ ນຳໃຊ້ວິທີການສຳພາດ ແບບລົງ ເລິກກັບຜູ້ທີ່ກ່ຽວຂ້ອງກັບ ການຄ້າເຂົ້າລາວ ຕາມຕ່ອງໂສ້ (ພາກລັດ,ບໍລິສັດສົ່ງອອກ,ໂຮງສີເຂົ້າ )ໃນແຂວງສະຫວັນ ນະເຂດ ແລະ ແຂວງຄຳມ່ວນ ໃນທ້າຍເດືອນ ມິຖຸນາ 2018. ໂດຍຕັ້ງຫຼາຍຄຳຖາມ ເພື່ອຕອບຂໍ້ສົງໃສ, ສິ່ງທີ່ ພົບພໍ້ໃນການຄົ້ນຄວ້າຄັ້ງນີ້ ຕາມຄຳຖາມສຳຄັນມີຄື:

**1). ຕໍ່ກັບຂໍ້ສົງໃສທີ່ວ່າທາງການຈີນປົກປ້ອງຜູ້ຜະລິດເຂົ້າພາຍ ໃນຂອງຈີນເຊິ່ງເຮັດໃຫ້ເຂົ້າລາວສົ່ງເຂົ້າ ຈີນ ບໍ່ໄດ້? ເປັນຫຍັງ ໂຮງສີ ທີ່ຈະສົ່ງອອກໄປ ຈີນ ຕ້ອງໄດ້ມາດຕະຖານເຂົ້າຈີນ** (AQSIQ)?

ສປ ຈີນ ເປັນປະເທດ ທີ່ມີພົນລະເມືອງຫຼາຍທີ່ສຸດ ໃນໂລກ ແລະ ບໍ່ສາມາດຜະລິດເຂົ້າ ໃຫ້ພຽງພໍກັບຄວາມ ຕ້ອງການບໍລິໂພກພາຍໃນປະເທດເອງໄດ້ , ຈີນຈຶ່ງເປັນ ປະເທດທີ່ນຳເຂົ້າເຂົ້າສານລາຍໃຫຍ່ຂອງໂລກ. ເພາະສະນັ້ນ ບັນຫາຂອງການສົ່ງເຂົ້າສານລາວ ໄປຈີນ ຈຶ່ງ ບໍ່ມີສາເຫດມາຈາກ ນະໂຍບາຍປົກປ້ອງຜູ້ຜະລິດພາຍໃນ ຂອງສປຈີນ. ໃນປີ2016 ຈີນ ນຳເຂົ້າຜະລິດຕະພັນເຂົ້າ ມີມູນຄ່າທັງໝົດ 1586.12ລ້ານໂດລາ ແລະ ໄດ້ເພີ່ມ ຂຶ້ນເປັນ 1827.84 ລ້ານໂດລາ ໃນປີ2017. ປະເທດ ຂາຍເຂົ້າໃຫ້ ຈີນ ມີ: ຫວຽດນາມ,ໄທ,ປາກິດສະຖານ, ກຳປູເຈຍ,ມຽນມາ,ລາວ. ການສົ່ງເຂົ້າໄປຈີນ ຈາກ ລາວ ມີແນວໂນ້ມເພີ່ມຂຶ້ນ ຈາກ 28.24 ລ້ານໂດລາ ໃນປີ 2016 ຫາ 32.76 ລ້ານໂດລາ ໃນປີ 2017 ແລະ ຈີນ ໄດ້ໃຫ້ໂກຕ້າແກ່ ລາວ ສຳລັບສົ່ງເຂົ້າໄປຈີນ2ຄັ້ງ: 8000 ໂຕນ ໃນປີ2015 -2016 ແລະ ເພີ່ມຂຶ້ນເປັນ 20,000 ໂຕນ ໃນຄັ້ງທີ2 ໃນປີ2016-2017.

ເຖິງວ່າສປຈີນບໍ່ໄດ້ກີດກັ້ນການນຳເຂົ້າຈາກລາວ ,ແຕ່ ມີພຽງບໍລິສັດດຽວ (ບໍລິສັດສອນເຢ) ທີ່ໄດ້ຮັບອະນຸຍາດ ເປັນຕົວແທນ ມີສິດສົ່ງເຂົ້າລາວໄປສປຈີນ. ການຜູກຂາດ ຕະຫຼາດ , ເຮັດໃຫ້ ບໍລິສັດສອນເຢ ມີອຳນາດໃນການ ຄວບຄຸມລາຄາຊື້ ຢູ່ໃນ ລາວ.

ເຫດຜົນທີ່ໂຮງສີເຂົ້າລາວ ຕ້ອງໄດ້ມາດຕະຖານຂອງ ຈີນ ແມ່ນອີງໃສ່ກົດໝາຍຄວາມປອດໄພດ້ານອາຫານ ທີ່ສປຈີນ ປະກາດໃຊ້ໃນປີ2012 ທີ່ກຳນົດໄວ້ວ່າ ເຂົ້າທີ່ ຈະນຳເຂົ້າໄປຈີນຕ້ອງໄດ້ຜ່ານການຢັ້ງຢືນມາດຕະຖານ ຄວາມປອດໄພດ້ານອາຫານ ຈາກອົງກອນຄວບຄຸມກວດ

ສອບ ແລະ ກັກກັນພືດ ແລະ ສັດ ແຫ່ງສປຈີນ (AQSIQ). ລາຍການກວດສອບ ເພື່ອອອກໃບຢັ້ງຢືນມາດຕະຖານເຂົ້າ ທີ່ນຳເຂົ້າສປຈີນ(ໃບຢັ້ງຢືນ AQSIQ) ໄດ້ສະແດງ ຢູ່ໃນຕາຕະລາງ1.

**ຕາຕະລາງທີ1: ມາດຕະຖານເຂົ້າສານ ສຳລັບນຳເຂົ້າ ສປຈີນ**

| | ລາຍການ | ຄ່າມາດຕະຖານ |
|---|---|---|
| 1 | ຄວາມຊຸ່ມ | 14% |
| 2 | ເຂົ້າເມັດເຕັມ | 74% |
| 3 | ເຂົ້າເມັດແຕກ | 3% |
| 4 | ອັດຕາສ່ວນຕ່າງຂອງເມັດເຂົ້າ | >2% |
| 5 | ເມັດເຂົ້າທີ່ມີສີແດງເຈືອປົນ | 0.5% |
| 6 | ເມັດມີສີເຫຼືອງເຈືອປົນ | 0.5% |
| 7 | ເມັດເຂົ້າຈ້າວທີ່ເປັນສີຂາວຂຸ່ນເຈືອປົນ | 2% |
| 8 | ເມັດເຂົ້າໜຽວຂາວເຈືອປົນ | 0.5% |
| 9 | ເມັດເຂົ້າທີ່ເສຍຫາຍເຈືອປົນ | 0.5% |
| 10 | ເມັດເຂົ້າເປືອກ,ແມງໄມ້,ວັດຖຸເຈືອປົນ | 0% |
| 11 | ຄວາມບໍລິສຸດ | 93% |
| 12 | ຄວາມຍາວຂອງເມັດເຂົ້າ | 7.02ມີນລີແມັດ |

**2).ໂຮງສີລາວ ຕ້ອງເຮັດຫຍັງແດ່ ເພື່ອໃຫ້ໄດ້ມາດຕະຖານ ຈີນ? ບັນຫາທີ່ເຮັດໃຫ້ໂຮງສີ ລາວ ບໍ່ໄດ້ມາດຕະຖານຈີນ ແມ່ນຫຍັງ?**

ໂຮງສີທີ່ຕ້ອງການສົ່ງເຂົ້າໄປສປຈີນ, ຕ້ອງເລີ່ມຈາກການປະເມີນຄວາມພ້ອມຂອງໂຮງສີຕົນເອງ ກ່ຽວກັບໂຮງອົບເຂົ້າ, ໂຮງສີເຂົ້າ, ລານຕາກເຂົ້າທີ່ໄດ້ມາດຕະຖານ ,ເຄື່ອງຄັດເມັດ, ເຄື່ອງຍິງສີ, ສາງເກັບມ້ຽນວັດຖຸດິບ, ສາງເກັບມ້ຽນເຂົ້າສານ, ລົດຍົກ, ທຶນ, ບຸກຄະລາກອນ ແລະ ລະບົບການບໍລິຫານຄົບຊຸດຮອບດ້ານ.

ຂັ້ນຕອນທີ2 ແມ່ນປະສານຫາໜ່ວຍງານທີ່ຮັບຜິດຊອບ. ໂຮງສີແຈ້ງຈຸດປະສົງ ທີ່ຕ້ອງການໄດ້ໃບຢັ້ງຢືນມາດຕະຖານເຂົ້າຈີນໄປຫາກົມປູກຝັງ , ແລ້ວ ກົມປູກຝັງຈະສົ່ງວິຊາການໄປເຮັດການປະເມີນເບື້ອງຕົ້ນ(ຈົດທະບຽນພື້ນທີ່ປູກ ແລະ ສະຖານທີ່ຫຸ້ມຫໍ່ໃຫ້ແກ່ໂຮງສີ) ວ່າຜ່ານມາດຕະຖານເງື່ອນໄຂບໍ່. ຈາກນັ້ນກົມປູກຝັງ ຈະປະກອບເອກະສານ ແລະ ຈະສົ່ງລາຍຊື່ຜູ້ທີ່ຜ່ານເງື່ອນໄຂໄປຫາ ທາງອົງກອນຄວບຄຸມກວດສອບ ແລະ ກັກກັນພືດ ແລະ ສັດ ແຫ່ງສປຈີນ(AQSIQ).

ໃນຂັ້ນຕອນທີ3 ທາງອົງກອນAQSIQ ຈະສົ່ງເຈົ້າໜ້າທີ່ໄປກວດສອບໂຮງສີ ແລະ ປະເມີນຕາມມາດຕະຖານຕາມລາຍການໃນ ຕາຕະລາງ1, ການຂໍໃບຢັ້ງຢືນມາດຕະຖານເຂົ້າຈີນມີຄ່າໃຊ້ຈ່າຍສູງ ເພາະຕ້ອງໄດ້ເຊີນທີມງານຊ່ຽວຊານຈາກອົງກອນ AQSIQ ມາຈາກຕ່າງປະເທດ ໂດຍໂຮງສີເປັນຜູ້ຮັບພາລະຄ່າໃຊ້ຈ່າຍຂັ້ນຕ່ຳ 10,000 ໂດລາ.

ເຫດຜົນທີ່ໂຮງສີລາວບໍ່ໄດ້ຮັບໃບຢັ້ງຢືນມາດຕະຖານ AQSIQ ແມ່ນເນື່ອງມາຈາກຫຼາຍສາເຫດຄື:ສາເຫດທີ1 ແມ່ນຕົ້ນທຶນໃນການຂໍ ໃບຢັ້ງຢືນມາດຕະຖານ AQSIQ ສູງ ແລະ ຄວາມບໍ່ແນ່ນອນ ເຊັ່ນ:ໄດ້ຮັບມາດຕະຖານ AQSIQ ແລ້ວ ໂກຕ້າສົ່ງອອກໄປຈີນ ຈະມີການສືບຕໍ່ເທົ່າປານໃດ, ຈະຂໍໂກຕ້າສົ່ງເຂົ້າໄປຈີນແນວໃດ, ຂໍຢູ່ໃສ, ຈະໄດ້ເທົ່າໃດ,ໃຜຈະໃຫ້ຄຳແນະນຳ.ໂຮງສີລາວສ່ວນຫຼາຍຢາກເຮັດແບບຄ່ອຍເປັນຄ່ອຍໄປ ເນື່ອງຈາກເງິນທຶນມີຈຳກັດ ພ້ອມທັງຍັງຂາດຜູ້ທີ່ໃຫ້ຂໍ້ມູນກ່ຽວກັບຕະຫຼາດເຂົ້າ ຢູ່ຈີນແບບເລິກເຊິ່ງ ແລະ ຈັດຕັ້ງນຳພາເຮັດຢ່າງຈິງຈັງ.

ສາເຫດທີ2 ຜູ້ປະກອບການໂຮງສີເຂົ້າລາວ ຍັງມີທາງເລືອກທີ່ດີກວ່າການສົ່ງເຂົ້າໄປຈີນ ເຊັ່ນ: ການຂາຍເຂົ້າໄປສະຫະພາບເອີລົບ ທີ່ມີຂັ້ນຕອນງ່າຍກວ່າການສົ່ງອອກໄປຈີນ;ການຂາຍເຂົ້າໃຫ້ຕະຫຼາດພາຍໃນທີ່ໄດ້ລາຄາດີກວ່າ ; ການສົ່ງອອກໄປຫວຽດນາມ,ໄທ ຕາມລະບົບການຄ້າຊາຍແດນ ທີ່ຈະມີພໍ່ຄ້າເຂົ້າມາຕິດຕໍ່ຊື້ຢູ່ໂຮງສີໂດຍກົງ, ແລະ ຈ່າຍເງິນສົດ. ດັ່ງນັ້ນຜູ້ປະກອບການໂຮງສີລາວ ຍັງບໍ່ມີຄວາມກະຕືລືລົ້ນພຽງພໍ ໃນການສົ່ງອອກໄປຈີນ ທີ່ເປັນຕະຫຼາດໃໝ່ສຳລັບຜູ້ປະກອບການລາວ.

ສາເຫດທີ3 ຄຸນນະພາບວັດຖຸດິບ (ເຂົ້າເປືອກ)ບໍ່ດີພໍ (ຊະນິດພັນເຂົ້າປົນກັນກັບພັນເຂົ້າອື່ນໆ) ເຮັດໃຫ້ເກີດຕົ້ນທຶນສູງໃນຂະບວນການຄັດເລືອກ ແລະ ແປຮູບ. ປັດຈຸບັນມີການຍາດແຍ່ງຊື້ວັດຖຸດິບສູງຂຶ້ນ, ເຮັດໃຫ້ການສະໜອງບໍ່ພໍ ແລະ ໂຮງສີບໍ່ຖືກໃຊ້ຢ່າງມີປະສິດທິຜົນ. ເຫດຜົນຫຼັກ ໃນການສະໜອງບໍ່ພໍ ແມ່ນຊາວນາລາວສ່ວນຫຼາຍ ເຮັດນາແບບພໍກຸ້ມກິນ,ມີຜົນຜະລິດສ່ວນເກີນຈຶ່ງຂາຍ, ບໍ່ໄດ້ເອົາຈິງເອົາຈັງ ກັບການຜະລິດເປັນສິນຄ້າ.

**3).ຫຼັງຈາກຜູ້ປະກອບການລາວ ໄດ້ມາດຕະຖານດັ່ງກ່າວແລ້ວ ຈະສົ່ງອອກໄດ້ ຢ່າງສະດວກ ແລະ ມີກຳໄລບໍ່?**

ເຖິງແມ່ນວ່າຜູ້ປະກອບການ ໂຮງສີເຂົ້າລາວຈະໄດ້ ໃບຢັ້ງຢືນ AQSIQ ກໍ່ຍັງບໍ່ແນ່ວ່າຈະສົ່ງອອກໄປສປຈີນ ໄດ້ ຢ່າງສະດວກ ແລະ ມີກຳໄລ ທຽບເທົ່າກັບຕະຫຼາດ ສົ່ງອອກ ທີ່ອື່ນ ເພາະວ່າ ການສົ່ງອອກ ມີຫຼາຍຂັ້ນຕອນ ແລະ ລາຄາ ຢູ່ ຈີນ ກໍບໍ່ມີຄວາມແນ່ນອນ. ອີກຢ່າງ ແລະ ເປັນເລື່ອງສຳຄັນ ແມ່ນຄວາມສາມາດແຂ່ງຂັນ ຂອງຜູ້ສົ່ງ ອອກລາວ ຖືກຈຳກັດໂດຍຕົ້ນທຶນທີ່ສູງ ເນື່ອງຈາກປະ ສິດທິຜົນຕ່ຳ.

ຂັ້ນຕອນການສົ່ງເຂົ້າອອກຈາກລາວໄປຈີນມີຄື: ຫຼັງ ຈາກໂຮງສີໄດ້ໃບຢັ້ງຢືນມາດຕະຖານ AQSIQແລ້ວ. ໂຮງສີຕຽມສິນຄ້າໃຫ້ພ້ອມ ແລະ ໄດ້ຮັບຄຳສັ່ງຊື້ຈາກລູກ ຄ້າ(PO). ຈາກນັ້ນຜູ້ສົ່ງອອກຕ້ອງຕຽມແລ່ນເອກະສານ ເພື່ອສົ່ງອອກ (ສ້າງໃບ Invoice ແລະ Packing ເພື່ອ ໄປແລ່ນ ໃບຢັ້ງຢືນຄວາມປອດໄພຈາກແມງໄມ້ ແລະ ສັດຕູພືດ ( Phyto) ຢູ່ ພະແນກກະສິກຳ ແລະ ປ່າໄມ້ ແຂວງ,ຈາກນັ້ນໄປພະແນກອາກອນແຂວງເພື່ອເສຍຄ່າ ພັນທະອາກອນ,ຈາກນັ້ນໄປພະແນກອຸດສາຫະກຳ ແລະ ການຄ້າແຂວງ ເພື່ອອອກ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO) ຈາກນັ້ນປະກອບເອກະສານການສົ່ງອອກຂອງ ກົມພາສີ ເພື່ອແຈ້ງການສົ່ງອອກທີ່ດ່ານຊາຍແດນ,ຈາກ ນັ້ນຕິດຕໍ່ບໍລິສັດຂົນສົ່ງ ,ເອົາສິນຄ້າເຂົ້າຕູ້ຄອນເທັນເນີ , ຣົມຢາເພື່ອໃຫ້ປາສະຈາກຈາກແມງໄມ້ ແລະ ສັດຕູພືດ ເພື່ອຂໍໃບຮັບຮອງ. ສຸດທ້າຍກ່ອນການສົ່ງອອກຕ້ອງເຊີນ ເຈົ້າໜ້າທີ່ກະສິກຳມາກວດເພື່ອເຮັດໃບເຄື່ອນຍ້າຍສິນຄ້າ. ຈາກນັ້ນຂົນສົ່ງສິນຄ້າຈາກສາງເອົາໄປລົງທ່າເຮືອແຫຼມສະ ບັງ ທີ່ ປະເທດໄທ ແລະ ສົ່ງໄປສປຈີນ.

ເຂົ້າລາວທີ່ສົ່ງໄປຂາຍຢູ່ຈີນ ຜ່ານມາໄດ້ລາຄາດີໃນ ໄລຍະທຳອິດ , ແຕ່ ຈາກນັ້ນ ລາຄາໄດ້ຫຼຸດລົງ ເຊັ່ນ: ລາຄາເຂົ້າໜຽວ ໃນປີ 2016 700 ໂດລາ, ໃນປີ 2017 550 ໂດລາ ແລະ ໃນປີ 2018 610 ໂດລາ ແລະ ລາຄາ ເຂົ້າຈ້າວໃນປີ 2016 865 ໂດລາ, ໃນປີ2017 775 ໂດລາ. ຕາມຂໍ້ມູນປີ2017 ລາຄາເຂົ້າຫວຽດນາມ 345 ໂດລາ, ເຂົ້າໄທ 461ໂດລາ, ເຂົ້າກຳປູເຈຍ 635 ໂດລາ (ປະເພດເຂົ້າຫັກ5%) ເຂົ້າລາວແມ່ນມີລາຄາສູງ.

ເມື່ອສົມທຽບລາຄາເຂົ້າດັ່ງກ່າວ ກັບລາຄາເຂົ້າທີ່ ຂາຍຢູ່ພາຍໃນ ເຫັນວ່າລາຄາເຂົ້າທີ່ຂາຍພາຍໃນໃນຫຼາຍ ຊ່ວງເວລາແມ່ນສູງກວ່າລາຄາສົ່ງອອກໄປສປຈີນ (ຍົກເວັ້ນໃນໄລຍະເກັບກ່ຽວທີ່ລາຄາເຂົ້າຈະລົງ). ຕົ້ນ ທຶນຂອງໂຮງສີ ລາວ ທີ່ປາກສາງແມ່ນ 700-800ໂດລາ, ສ່ວນລາຄາທີ່ບໍລິສັດສົ່ງອອກຕ້ອງການຊື້ແມ່ນ500-600 ໂດລາ (ກໍລະນີແຂວງ ຄຳມ່ວນ) ເຮັດໃຫ້ການສົ່ງ ເຂົ້າໄປ ຈີນ ຢູ່ແຂວງ ຄຳມ່ວນ ບໍ່ເກີດຂຶ້ນໃນໄລຍະດັ່ງກ່າວ, ເບິ່ງ ຕົ້ນທຶນຄ່າໃຊ້ຈ່າຍໃນ ການສົ່ງເຂົ້າໄປສປຈີນ ໃນ ຕາຕະລາງ2.

**ຕາຕະລາງທີ2: ຕົ້ນທຶນຄ່າໃຊ້ຈ່າຍ ການສົ່ງອອກເຂົ້າໄປສປຈີນ**

| | ລາຍການ | ຄ່າໃຊ້ຈ່າຍຕໍ່ໂຕນ |
|---|---|---|
| 1 | ໃບຢັ້ງຢືນມາດຕະຖານເຂົ້າຈີນ | 50,000 ກີບ |
| 2 | ຕົ້ນທຶນການຜະລິດເຂົ້າສານ(ສິນຄ້າ) | 5,200,000 ກີບ |
| 3 | ປະກອບເອກະສານສົ່ງອອກ | 161,000 ກີບ |
| 4 | ຣົມຢາ | 32,000 ກີບ |
| 5 | ຂົນສົ່ງຈາກໂຮງສີໄປຫາສປຈີນ | 696,500 ກີບ |
| 6 | ຄ່າສິ້ນເປືອງແຮງງານໃນການສົ່ງອອກ | 50,000 ກີບ |
| 7 | ຄ່າສິ້ນເປືອງບໍລິຫານການສົ່ງອອກ | 50,000 ກີບ |
| 8 | ຄ່າໃຊ້ຈ່າຍ ອື່ນໆ | 50,000 ກີບ |
| | ຕົ້ນທຶນຄ່າໃຊ້ຈ່າຍສະເລ່ຍຕໍ່ໂຕນ | **6,396,500 ກີບ (750 ໂດລາ)** |

ແຫຼ່ງຂໍ້ມູນ: ການສຳພາດບໍລິສັດສົ່ງອອກ ແລະ ການໄລ່ລຽງຂອງຜູ້ຂຽນ.

ການໄລ່ລຽງ ດັ່ງຢູ່ໃນ ຕາຕະລາງທີ 2 ສະແດງໃຫ້ ເຫັນວ່າ ການສົ່ງອອກໄປຈີນ ນັ້ນມີຫຼາຍສິ່ງທີ່ທ້າທາຍ ສຳລັບໂຮງສີ ຫຼື ບໍລິສັດ ທີ່ຕ້ອງການສົ່ງອອກໄປ ຈີນ. ຕົ້ນທຶນການຜະລິດຂອງໂຮງສີ ລາວ ແມ່ນຍັງສູງກວ່າ ລາຄາທີ່ຝ່າຍຈີນຕ້ອງການຊື້, ແຕ່ໃນໄລຍະຍາວ ເມື່ອ ກຳລັງການຜະລິດຫຼາຍຂຶ້ນ, ຜະລິດເຕັມສະມັດຖະພາບ ແລ້ວຈະເຮັດໃຫ້ຕົ້ນທຶນຫຼຸດລົງ.

ເບິ່ງຂໍ້ມູນການສົ່ງອອກເຂົ້າລາວໄປຂາຍ ທີ່ສປຈີນ ຢ່າງເປັນທາງການອີງຕາມໂກຕ້າ 20,000 ໂຕນ ທີ່ ບໍລິສັດສົ່ງອອກເຂົ້າລາວ (ບໍລິສັດສອນເຢ) ສາມາດສົ່ງ ອອກໄດ້ແມ່ນ 13,762 ໂຕນ ຫຼື 69% ຂອງໂກຕ້າ , ມີ ມູນຄ່າລວມ 8,712,138 ໂດລາ (ເຂົ້າທີ່ສົ່ງອອກໄປສປ ຈີນ ສ່ວນຫຼາຍແມ່ນເຂົ້າສານໜຽວ ກວມເອົາ ສ່ວນແບ່ງ ເຖິງ 96%) ສະແດງໃນ ຕາຕະລາງທີ 3.

**ຕາຕະລາງທີ3 :ຂໍ້ມູນການສົ່ງອອກເຂົ້າໄປຂາຍຢູ່ສປຈີນ(AQSIQ)**

| ປີ | ປະລິມານສົ່ງອອກ | ມູນຄ່າສົ່ງອອກ |
|---|---|---|
| 2016 | 3,320 ໂຕນ | 2,370,712 ໂດລາ |
| 2017 | 7,555 ໂຕນ | 4,179,516 ໂດລາ |
| 2018 | 2,887 ໂຕນ | 2,161,910 ໂດລາ |
| **ລວມ** | **13,762 ໂຕນ** | **8,712,138 ໂດລາ** |
| ແຫຼ່ງຂໍ້ມູນ: ບໍລິສັດສອນເຢ,2018 | | |

ການຂາດຄວາມສາມາດແຂ່ງຂັນດ້ານລາຄາໃນຕະຫຼາດຈີນແມ່ນສາເຫດຫຼັກ ທີ່ເຮັດໃຫ້ເຂົ້າລາວ ບໍ່ສາມາດສົ່ງອອກໄດ້ ຕາມສັນຍາທີ່ລັດຖະບານລາວ ໄດ້ເຊັນກັບລັດຖະບານຈີນ ໃນການຊື້ຂາຍເຂົ້າ ໃນໂກຕ້າ 20,000 ໂຕນ,ອີງຕາມບໍລິສັດສອນເຢ.

## 3. ຂໍ້ສະເໜີແນະດ້ານນະໂຍບາຍ

ການລົງທຶນ ສໍາລັບການປັບປຸງໂຮງສີ ເພື່ອໃຫ້ໄດ້ມາດຕະຖານ AQSIQ ເຖິງຈະເປັນທຶນທີ່ບໍ່ໜ້ອຍ ແລະ ມີລາຍລະອຽດ ແລະ ຂັ້ນຕອນຫຼາຍຢ່າງ , ແຕ່ບໍ່ແມ່ນອຸປະສັກ ທີ່ສໍາຄັນທີ່ສຸດ. ລັດຖະບານຕ້ອງເຂົ້າຊ່ວຍແກ້ໄຂ ແມ່ນບັນຫາກ່ຽວກັບຕົ້ນທຶນສູງ , ຄຸນນະພາບຫຼຸດມາດຕະຖານ ເນື່ອງຈາກມີຫຼາຍແນວພັນປົນເປ ແລະ ຂາດປະລິມານວັດຖຸດິບທີ່ຕ້ອງການ ໃນລະດັບທີ່ເຮັດໃຫ້ໂຮງສີມີປະສິດທິພາບ. ດັ່ງນັ້ນ ສິ່ງທີ່ລັດຖະບານຕ້ອງເຮັດ ເພື່ອສົ່ງເສີມການສົ່ງອອກ ແລະ ຜະລິດເຂົ້າໃຫ້ເປັນສິນຄ້າ ມີຄື:

-ສົ່ງເສີມການພັດທະນາ ລະບົບການຜະລິດ ເພື່ອຍົກລະດັບປະສິດທິຜົນ ແລະ ຫຼຸດຜ່ອນການປົນເປແນວພັນ. ການພັດທະນາດັ່ງກ່າວ ອາດໄດ້ຜົນທີ່ສຸດ ຖ້າພາກສ່ວນກະສິກຳ ຮ່ວມມືກັນ ດ້ານວິຊາການ, ແນວພັນ ແລະ ທຶນ.

- ຊຸກຍູ້ໂຮງສີ ທີ່ຍັງບໍ່ສາມາດສົ່ງອອກໄປຈີນໄດ້ ໃຫ້ໄດ້ຮັບໃບຢັ້ງຢືນ AQSIQ, ເພາະວ່າໃນປັດຈຸບັນ ມີແຕ່ບໍລິສັດດຽວ ທີ່ມີ AQSIQ, ເຊິ່ງເປັນການຜູກຂາດຕະຫຼາດ ໃຫ້ຜູ້ຮັບຊື້ເພື່ອສົ່ງອອກ ສາມາດກົດລາຄາໄດ້.

- ສົ່ງເສີມການສ້າງຕັ້ງອົງກອນເອກະຊົນ ສໍາລັບສົ່ງອອກຜະລິດຕະພັນເຂົ້າ ໂດຍມີໂຮງສີ ທີ່ມີການສົ່ງອອກເປັນຫຼັກ. ອົງກອນດັ່ງກ່າວ ຈະສ້າງການປະຫຍັດ ໃນການຊ່ອຍຊອກຕະຫຼາດຕ່າງປະເທດ ແລະ ການເຈລະຈາລາຄາ ແລະ ປະລິມານການຊື້ຂາຍ.

## 4. ສະຫຼຸບ

ການຄົ້ນຄວ້າພົບວ່າ ອຸປະສັກການສົ່ງເຂົ້າລາວໄປຈີນແມ່ນບັນຫາພື້ນຖານການຜະລິດ ເພາະວ່າຊາວນາລາວເຮັດນາສໍາລັບການບໍລິໂພກພາຍໃນຄົວເຮືອນ ເປັນສ່ວນໃຫຍ່, ມີເຫຼືອຈຶ່ງຂາຍ, ເຮັດໃຫ້ການຄວບຄຸມຄຸນນະພາບຂອງເຂົ້າເປັນໄປໄດ້ຍາກ.

ການລົງທຶນ ສໍາລັບການປັບປຸງໂຮງສີ ເພື່ອໃຫ້ໄດ້ມາດຕະຖານ AQSIQ ເຖິງຈະເປັນທຶນທີ່ບໍ່ໜ້ອຍ ແລະ ມີລາຍລະອຽດ ແລະ ຂັ້ນຕອນຫຼາຍຢ່າງ , ແຕ່ບໍ່ແມ່ນອຸປະສັກ ທີ່ສໍາຄັນທີ່ສຸດທີ່ລັດຕ້ອງເຂົ້າຊ່ວຍ ແກ້ໄຂ , ເພາະວ່າ ບັນຫາກ່ຽວກັບຕົ້ນທຶນສູງ , ຄຸນນະພາບຫຼຸດມາດຕະຖານ ແລະ ຂາດປະລິມານວັດຖຸດິບທີ່ຕ້ອງການໃນລະດັບທີ່ເຮັດໃຫ້ໂຮງສີ ມີປະສິດທິພາບ.

ດັ່ງນັ້ນ, ສິ່ງທີ່ລັດຖະບານຕ້ອງເຮັດເພື່ອສົ່ງເສີມການສົ່ງອອກ ແລະ ຜະລິດເຂົ້າໃຫ້ເປັນສິນຄ້າ ມີຄື: ສົ່ງເສີມການພັດທະນາລະບົບການຜະລິດ ເພື່ອຍົກລະດັບປະສິດທິຜົນ ແລະ ຄຸນນະພາບ , ຊຸກຍູ້ໂຮງສີທີ່ຍັງບໍ່ສາມາດສົ່ງອອກໄປຈີນໄດ້ໃຫ້ໄດ້ຮັບໃບຢັ້ງຢືນ AQSIQ ແລະ ສົ່ງເສີມການສ້າງຕັ້ງອົງກອນເອກະຊົນ ສໍາລັບສົ່ງອອກຜະລິດຕະພັນເຂົ້າ.

## ເອກະສານອ້າງອີງ


ກອງປະຊຸມສຳມະນາ ການສົ່ງອອກໄປຈີນ ໃຫ້ແກ່ຜູ້ສົ່ງອອກຂະໜາດນ້ອຍ ແລະ ກາງ ໃນຂະແໜງກະສິກຳ. (Training for SMEs Exporters to access Chinese Market) ໃນຄັ້ງວັນທີ 14 ທັນວາ 2017, ທີ່ໂຮງແຮມເມີກຣວ, ນະຄອນຫຼວງວຽງຈັນ.

ຂໍ້ກຳນົດວ່າດ້ວຍມາດຕະຖານແຫ່ງຊາດ ສາທາລະນະລັດ ປະຊາຊົນຈີນ "ເຂົ້າ" ອີງກອນຄວບຄຸມກວດສອບ ແລະ ກັກກັນພືດ ແລະ ສັດ ແຫ່ງສປຈີນ "General Administration of Quality Supervision, Inspection and Quarantine of the People's Republic of China(AQSIQ)".

ປື້ມຄູ່ມື ແນະນາຄຸນນະພາບເຂົ້າ ແລະ ສົ່ງອອກເຂົ້າໄປສປຈີນ, ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ, 2018.

ບົດສະຫຼຸບຜົນການຈັດຕັ້ງປະຕິບັດ ວຽກງານກະສິກຳ ແລະ ປ່າໄມ້ ປີ2016-2017 ແລະ ທິດທາງແຜນການ ແຕ່ປີ 2018-2020,ແຂວງສະຫວັນນະເຂດ,2018.

ບົດສະຫຼຸບຜົນການຈັດຕັ້ງປະຕິບັດ ວຽກງານກະສິກຳ ແລະ ປ່າໄມ້ ປີ2016-2017 ແລະ ທິດທາງແຜນການ ແຕ່ປີ 2018-2020,ແຂວງຄຳມ່ວນ,2018.

ຂໍ້ມູນການສົ່ງອອກເຂົ້າໄປສປຈີນ ແຕ່ປີ2016-2018, ບໍລິສັດສວນເຢ, ຂະແໜງປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ,2018.

ບົດລາຍງານສະຫຼຸບຂັ້ນຕອນ ແລະ ຄ່າໃຊ້ຈ່າຍການແລ່ນເອກະສານຕົວຈິງເພື່ອ ສົ່ງອອກເຂົ້າໄປຕ່າງປະເທດ, ສະມາຄົມໂຮງສີເຂົ້າແຂວງຄຳມ່ວນ,2018.

ບົດບັນທຶກກອງປະຊຸມພົບປະລະຫວ່າງສະມາຄົມໂຮງສີເຂົ້າແຂວງຄຳມ່ວນ ແລະ ບໍລິສັດສວນເຢ "Summary meeting On Potential Accessibility (Department of Agriculture and Xuanye (Lao)Sole Co.Ltd", 15 June 2017.

ສະຖາບັນລະຫວ່າງປະເທດເພື່ອການຄ້າ ແລະ ການພັດທະນາ-ITD (2007), ກົນໄກສົ່ງອອກເຂົ້າຂອງ ສປປ ລາວ, ບາງກອກ,ປະເທດໄທ.

ITC Trade map data,2018"https://www.trademap.org/Country_SelProductCountry_TS.aspx?nvpm=1|156||||1006|||4|1|1|1|2|1|2|1|"ລາຍງານມູນຄ່ານຳເຂົ້າ ເຂົ້າຂອງສປຈີນ,ເຂົ້າເບິ່ງຂໍ້ມູນ: 30 ສິງຫາ 2018.

ສະມາຄົມຜູ້ສົ່ງອອກເຂົ້າໄທ (2014) ,ລາຍງານລາຄາສົ່ງອອກເຂົ້າ http://www.thairiceexporters.or.th /price.htm ເຂົ້າເບິ່ງຂໍ້ມູນ: 30 ສິງຫາ 2018,

ທະນາຄານໂລກ, ບົດຄົ້ນຄວ້າເຂົ້າ, ຊາວນາໄດ້ໜ້ອຍ ຜູ້ບໍລິໂພກຈ່າຍຫຼາຍ, ລາຄາເຂົ້າລາວແພງກວ່າປະເທດອື່ນ, 2017

ຂໍ້ມູນບົດສະຫຼຸບການລົງເກັບກຳພາກສະໜາມທີ່ແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ, ໃນຄັ້ງວັນທີ 27/7-4/8/2018.

ການສຶກສາຄວາມສາມາດໃນການສ້າງຄັງແຮເຂົ້າ ແລະ ຂາຍເຂົ້າເປັນສິນຄ້າຂອງສປປລາວ,ສະຖາບັນຄົ້ນຄວ້າເສດຖະກິດການຄ້າ 2013-2014.

ປື້ມສະຖິຕິກະສິກຳປະຈຳປີ2017,ກົມແຜນການ ແລະ ການເງິນ ກະຊວງກະສິກຳ ແລະ ປ່າໄມ້, ເມສາ,2018.

ເອກະສານປະກອບການຈົດທະບຽນພື້ນທີ່ປູກ, ບໍລິສັດໄອດີພີ, ຂະແໜງປູກຝັງ,ພະແນກກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ,2017.

ເອກະສານປະກອບການຈົດທະບຽນສະຖານທີ່ຫຸ້ມຫໍ່ຂອງໂຮງສີ, ບໍລິສັດໄອດີພີ, ຂະແໜງປູກຝັງ,ພະແນກກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ,2017.

ເອກະສານມາດຕະຖານເຂົ້າສົ່ງອອກໄປສປຈີນ, ອົງກອນຄວບຄຸມກວດສອບ ແລະ ກັກກັນພືດ ແລະ ສັດແຫ່ງສປຈີນ(AQSIQ), ບໍລິສັດສວນເຢ, 2017